ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ພະລັງງານ ແລະ ບໍ່ແຮ່

ເລກທີ 1155 /ພບ.
ນະຄອນຫຼວງວຽງຈັນ, ວັນທີ 23.10.08

# ຂໍ້ຕົກລົງ
## ຂອງລັດຖະມົນຕີ ວ່າການ ກະຊວງ ພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການ ສ້າງຕັ້ງ ແລະ ດຳເນີນວິສາຫະກິດໄຟຟ້າ

- ອີງໃສ່ ກົດໝາຍ ວ່າດ້ວຍໄຟຟ້າ ສະບັບເລກທີ 02/97/ສພຊ, ວັນທີ 12/4/1997;

-ອີງໃສ່ມາດຕາ ທີ 8 ຂອງດຳລັດນາຍົກລັດຖະມົນຕີສະບັບ ເລກທີ 157/ນຍ, ລົງວັນທີ 23/9/2002 ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍໄຟຟ້າ;

- ອີງໃສ່ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 135/ນຍ. ລົງວັນທີ 24/7/06 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງ ພະລັງງານ ແລະ ບໍ່ແຮ່;

ລັດຖະມົນຕີ ວ່າການ ກະຊວງ ພະລັງງານ ແລະ ບໍ່ແຮ່ ອອກ ຂໍ້ຕົກລົງ:

## ໝວດທີ I
## ຫຼັກການທົ່ວໄປ

**ມາດຕາ 1 ຈຸດປະສົງ** Purpose

ຂໍ້ຕົກລົງສະບັບນີ້ມີຈຸດປະສົງ ເພື່ອ ກຳນົດຂອບເຂດການເຄື່ອນໄຫວຂອງ ຜູ້ປະກອບກິດຈະການໄຟຟ້າ ແລະ ກຳນົດການຄຸ້ມຄອງ,ການກວດສອບ, ຂັ້ນຕອນ ການອອກໃບອະນຸຍາດດຳເນີນວິສະຫະກິດກ່ຽວກັບທຸລະກິດໄຟຟ້າ ເພື່ອຄວາມເປັນເອກະພາບໃນການຄຸ້ມຄອງ,ຕິດຕາມກວດກາ

ແລະ ປະກອບສ່ວນໃນການປະຕິບັດແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນເທື່ອລະກ້າວ.

### ມາດຕາ 2 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ໃຊ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍສ້າງຕັ້ງວິສາຫະກິດທີ່ດຳເນີນທຸລະກິດໄຟຟ້າຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍໄຟຟ້າ ແລະ ຂໍ້ຕົກລົງສະບັບນີ້ໃຊ້ສະເພາະໃນການກວດກາ,ກວດການເຄື່ອນໄຫວ,ຄຸ້ມຄອງວິສາຫະກິດກິດໄຟຟ້າທີ່ເປັນ ການລົງ ທຶນພາຍໃນປະເທດເທົ່ານັ້ນ.

### ມາດຕາ 3 ນິຍາມຄຳສັບ

3.1 ການກໍ່ສ້າງ

ໝາຍເຖິງການກໍ່ສ້າງລະບົບໄຟຟ້າ ເຊັ່ນ: ຕາຂ່າຍໄຟຟ້າແຮງດັນຕ່ຳ, ແຮງດັນກາງ,ແຮງດັນສູງ, ຕິດຕັ້ງໝໍ້ແປງ, ສະຖານີໄຟຟ້າ ແລະ/ ຫຼື ເຂື່ອນໄຟຟ້າ;

3.2 ການຕິດຕັ້ງ

ໝາຍເຖິງ ການກໍ່ສ້າງ, ຕິດຕັ້ງ, ຂະຫຍາຍ ແລະ ສ້ອມແປງລະບົບໄຟຟ້າຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 21 ຂອງ ກົດໝາຍວ່າດ້ວຍໄຟຟ້າ ເພື່ອຮັບໃຊ້ການຜະລິດ, ການບໍລິການ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ;

3.3 ການຂະຫຍາຍ

ໝາຍເຖິງ ການຂະຫຍາຍກິດຈະການ ຂອງວິສາຫະກິດ ທີ່ດຳເນີນທຸລະກິດ ກ່ຽວກັບ ກິດຈະການໄຟຟ້າ ຈາກຂັ້ນ 3 ຫາ ຂັ້ນ 2 ແລະ/ ຫຼື ຂັ້ນ 1;

3.4 ສະຖານທີ່

ໝາຍເຖິງ ສະຖານທີ່ນຳໃຊ້ເປັນ ບ່ອນປຸກສ້າງອາຄານ ຫຼື ບ່ອນທີ່ອຳນວຍຄວາມສະດວກເພື່ອໃຊ້ເປັນບ່ອນບໍລິຫານ ແລະ ຄຸ້ມຄອງໃນການດຳເນີນວິສະຫະກິດໄຟຟ້າ;

3.5. ພາຫະນະ

ໝາຍເຖິງ ສິ່ງທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ດຳເນີນວິສະຫະກິດໄຟຟ້າ;

3.6. ອຸປະກອນ

ໝາຍເຖິງ ອຸປະກອນທີ່ຈະຮັບໃຊ້ເຂົ້າໃນການດຳເນີນວິສະຫະກິດໄຟຟ້າຊຶ່ງປະກອບດ້ວຍຫຼາຍສິ້ນສ່ວນ ຫຼື ຫຼາຍຂະໜາດ ທີ່ແຕກຕ່າງກັນ;

3.7. ພາກສ່ວນທີ່ກ່ຽວຂ້ອງ

ໝາຍເຖິງຂະແໜງການທີ່ມີ ອຳນາດ ແລະ ໜ້າທີ່ ໃນການຄຸ້ມຄອງ, ກວດກາ, ກວດການໃນການດຳເນີນວິສະຫະກິດໄຟຟ້າ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຂອງຂໍ້ຕົກລົງສະບັບນີ້ ແລະ/ຫຼື ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ຫຼື ກົດໝາຍ ທີ່ກ່ຽວຂ້ອງ;

3.8. ຜູ້ຮັບໃບອະນຸຍາດ

ໝາຍເຖິງຜູ້ທີ່ໄດ້ມີຊື່ຢູ່ໃນໃບອະນຸຍາດດຳເນີນວິສະຫະກິດໄຟຟ້າຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

## ໝວດ ທີ II

## ເງື່ອນໄຂການຂໍດຳເນີນ ວິສະຫະກິດ ໄຟຟ້າ

ມາດຕາ 4 ເງື່ອນໄຂການຂໍດຳເນີນ ວິສະຫະກິດໄຟຟ້າ Who should complete

ບຸກຄົນ ຫຼື ນິຕິບຸກຄົນມີຈຸດປະສົງຢາກດຳເນີນວິສະຫະກິດ ໄຟຟ້າໃດ ໜຶ່ງຕາມທີ່ກຳນົດໄວ້ໃນ ມາດຕາ 8 ຂອງ ກົດໝາຍວ່າດ້ວຍໄຟຟ້າ ຈະຕ້ອງມີ ເງື່ອນໄຂດັ່ງຕໍ່ໄປນີ້:

4.1. ຖານະທາງດ້ານການເງິນ Qualification Need

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຕ້ອງການຢາກ ສ້າງຕັ້ງ ແລະ ດຳເນີນວິສະຫະກິດໄຟຟ້າຕ້ອງມີຖານະທາງດ້ານການເງິນທີ່ ໝັ້ນຄົງ ແລະ ພຽງພໍສຳລັບການດຳເນີນທຸລະກິດຕາມລະດັບຊັ້ນຂອງ ຕົນທີ່ຮ້ອງຂໍດຳເນີນນັ້ນ, ຕົ້ນທຶນທັງໝົດຈະປະເມີນໄດ້ຈາກມູນຄ່າຊັບສິນບັດຄົງທີ່ ແລະ ທຶນໝູນວຽນທີ່ມີຕົວຈິງ ຫຼື ອີງຕາມຜົນ ການກວດສອບບັນຊີຊັບສິນທັງໝົດຂອງບໍລິສັດຊື່ງອົງການ ລັດທີ່ກ່ຽວຂ້ອງເປັນຜູ້ຢັ້ງຢືນໃຫ້.

4.2. ດ້ານວິຊາການ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຕ້ອງການຢາກ ສ້າງຕັ້ງ ແລະ ດຳເນີນວິສະຫະກິດໄຟຟ້າຕ້ອງມີ ວິສະວະກອນລະດັບຊັ້ນສູງຂຶ້ນໄປ ທີ່ເຄີຍຜ່ານງານ ແລະ ມີປະສົບການຢ່າງຕ່ຳ 5 ປີ , ທີ່ກ່ຽວພັນກັບທຸລະກິດຕາມທີ່ຕົນເອງໄດ້ຮ້ອງຂໍດຳເນີນ,ນອກນັ້ນຍັງຈະຕ້ອງປະກອບມີພະນັກງານຄຸ້ມຄອງບໍລິຫານໃຫ້ພຽງພໍ. ພະນັກງານທັງໝົດດັ່ງກ່າວຕ້ອງບໍ່ແມ່ນພະນັກງານສັງກັດລັດ ແລະ/ຫຼື ບໍ່ມີພັນທະຜູກພັນກັບພາກສ່ວນອື່ນ( ລາຍ ລະອຽດຕາມແບບຟອມຂັດຕິດ ທີ 06 )

4.3. ອຸປະກອນຮັບໃຊ້

~~ບຸກຄົນ ຫຼື ນິຕິບຸກຄົນ ທີ່ຕ້ອງການຢາກ ສ້າງຕັ້ງ ແລະ ດຳເນີນວິສະຫະກິດໄຟຟ້າຕ້ອງມີພາ~~ຫະນະ, ກົນຈັກ ແລະ ອຸປະກອນເຄື່ອງມືເພື່ອຮັບໃຊ້ການດຳເນີນທຸລະກິດຂອງຕົນຕາມແຕ່ລະຊັ້ນຂອງກິດຈະການທີ່ຕົນໄດ້ ຮອ້ງຂໍດຳເນີນນັ້ນ. (ລາຍລະອຽດ ຕາມແບບຟອມຂັດຕິດທີ 04 ແລະ 05 )

4.4. ເງື່ອນໄຂ ອື່ນໆ

ນອກຈາກເງື່ອນໄຂທີ່ກ່າວມາຂ້າງເທິງ ຜູ້ຮ້ອງຂໍສ້າງຕັ້ງ ແລະ ດຳເນີນວິສະຫະກິດໄຟຟ້າຕ້ອງມີສຳນັກງານຖາວອນຂອງຕົນຢ່າງຄັກແນ່ ເພື່ອ ນຳໃຊ້ເປັນສະຖານທີ່ບໍລິຫານ ແລະ ດຳເນີນ

ວຽກງານ. ພາຍໃນສໍານັກງານຍັງຕ້ອງປະກອບມີເຄື່ອງຮັບໃຊ້ຫ້ອງການຕາມຄວາມເໝາະສົມກັບກິດຈະການຂອງຕົນ.

ມາດຕາ 5 ການປະກອບເອກະສານເພື່ອຂໍ ສ້າງຕັ້ງ ແລະ ດໍາເນີນ ວິສະຫະກິດ ໄຟຟ້າ

Docs.

ບຸກຄົນ ຫຼື ນິຕິບຸກຄົນທີ່ມີເງື່ອນໄຂຕາມທີ່ກໍານົດໄວ້ໃນມາດຕາ 4 ຂອງ ຂໍ້ຕົກລົງສະບັບນີ້, ທີ່ມີຈຸດປະສົງຢາກສ້າງຕັ້ງ ແລະ ດໍາເນີນວິສາຫະກິດໄຟຟ້າຈະຕ້ອງໄດ້ປະກອບເອກະສານດັ່ງນີ້:

1. ໃບຄໍາຮ້ອງ(ຂຽນຕາມຕົວຢ່າງແບບຟອມ ຊັດຕິດທີ 01 )
2. ໃບຢັ້ງຢືນທີ່ຢູ່ ( ສໍາຫຼັບຄົນລາວ) ຫຼື ໃບຢັ້ງຢືນຄົນຕ່າງດ້າວທີ່ ກະຊວງ ປ້ອງກັນຄວາມສະຫງົບອອກໃຫ້ ( ສໍາຫຼັບຄົນຕ່າງດ້າວທີ່ມີພູມລໍາເນົາຖາວອນຢູ່ ສປປ ລາວ)
3. ໃບແຈ້ງໂທດ ໝາຍເລກ 3
4 ບົດປະເມີນຜົນທາງດ້ານເສດຖະກິດແລະສັງຄົມ(ຂຽນຕາມຕົວຢ່າງແບບຟອມຊັດຕິດທີ່ 02)
5 ກົດລະບຽບພາຍໃນ (ຂຽນຕາມຕົວຢ່າງແບບຟອມ ຊັດຕິດ ທີ 03)
6 ໂຄງຮ່າງການຈັດຕັ້ງ ຂອງ ວິສາຫະກິດ
7. ໃບຢັ້ງຢືນຖານະທາງດ້ານການເງິນ ແລະ ຊັບສິນ.
8. ບັນຊີ ອຸປະກອນຮັບໃຊ້
9. ບັນຊີຜູ້ຖືຫຸ້ນ ( ຖ້າເປັນຂອງລວມໝູ່ ຫຼື ວິສາຫະກິດຫຸ້ນສ່ວນ)
10 ຊີວະປະຫັວດຢັ້ງຢືນຈາກອໍານາດການປົກຄອງຂອງຜູ້ທີ່ຈະເປັນອໍານວຍການ ແລະ ວິສະວະກອນ ພ້ອມດ້ວຍໃບຢັ້ງຢືນວຸດທິການສຶກສາ ແລະ ໃບຢັ້ງຢືນການຜ່ານງານຕົວຈິງຂອງຄະນະອໍານວຍການ ແລະ ນັກວິສະວະກອນ( ຖ້າມີ).
11 ລະບຽບການພາຍໃນວິສາຫະກິດວ່າດ້ວຍຄວາມປອດໄພໃນການດໍາເນີນງານ
12. ໃບຕາດິນ;
13. ໃບປຸ່ງແປງການນໍາໃຊ້;
14. ແຜນຜັງ ຊີ້ບອກທີ່ຕັ້ງຂອງວິສາຫະກິດ;
15. ບັນຊີຈໍານວນພົນຕົວຈິງ;
16. ໃບສັນຍາຈ້າງພະນັກງານ.

ມາດຕາ 6 ຂັ້ນຕອນ ແລະ ສະຖານທີ່ຍື່ນຄໍາຮ້ອງຂໍສ້າງຕັ້ງ ແລະ ດໍາເນີນວິສາຫະກິດໄຟຟ້າ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ປະກອບເອກະສານ ແລະ ມີ ເງື່ອນໄຂຄົບຖ້ວນຕາມ ມາດຕາ 4 ແລະ ມາດຕາທີ 5 ຂອງຂໍ້ຕົກລົງສະບັບນີ້, ຈະຕ້ອງຍື່ນຄໍາຮ້ອງຂໍສ້າງຕັ້ງ ແລະ ດໍາເນີນວິສາຫະກິດໄຟຟ້າດັ່ງກ່າວນໍາເຈົ້າໜ້າຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາ. ພາຍຫຼັງໄດ້ຮັບໃບອະນຸຍາດດໍາເນີນວິສາຫະກິດໄຟຟ້ານໍາຂະແໜງພະລັງງານ ແລະ ບໍ່ແຮ່ແລ້ວ; ກ່ອນຈະ

ດຳເນີນທຸລະກິດຂອງຕົນໄດ້ກໍ່ຕ້ອງໄດ້ຮັບອະນຸຍາດຂຶ້ນທະບຽນນຳຂະແໜງການຄ້າແລະຂະແໜງການ ເງິນເສຍ ກ່ອນ.

**ມາດຕາ 7 ການຈັດຊັ້ນການດຳເນີນ ວິສະຫະກິດໄຟຟ້າ**

ການຈັດຊັ້ນແມ່ນອີງຕາມຕົ້ນທຶນຈົດທະບຽນຕ່ຳສຸດ ແລະ ປະເພດຂອງວິສາຫະກິດກ່ຽວກັບກິດຈະການໄຟຟ້າແຕ່ລະຊັ້ນຈະໄດ້ລະບຸໄວ້ຢູ່ໃນໃບທະບຽນວິສາຫະກິດ.

<u>ຕາຕະລາງການຈັດຊັ້ນ ການດຳເນີນ ວິສະຫະກິດໄຟຟ້າ</u> fees. comment.

| ລະດັບຊັ້ນ | ທຶນຈົດທະບຽນ (ກີບ) | ຈຳນວນວິສະວະກອນປະຈຳ | ຂອບເຂດການອະນຸຍາດໃຫ້ເຄື່ອນໄຫວທຸລະກິດ | ໝາຍເຫດ |
|---|---|---|---|---|
| ຊັ້ນ1 | 1.000 ລ້ານກີບຂຶ້ນໄປ | 5 ຄົນຂຶ້ນໄປ | ເຄື່ອນໄຫວໄດ້ໃນຂອບເຂດທົ່ວປະເທດ | ອະນຸຍາດດຳເນີນການສຳຫຼວດ, ອອກແບບ ແລະ/ຫຼືກໍ່ສ້າງເຂື່ອນໄຟຟ້າ, ສາຍສົ່ງໄຟຟ້າແຮງດັນສູງ,ແຮງດັນກາງ,ແຮງດັນຕ່ຳ, ຕິດຕັ້ງໝໍ້ແປງ, ສະຖານີໄຟຟ້າ ແລະ ຕິດຕັ້ງໄຟຟ້າທົ່ວໄປ |
| ຊັ້ນ2 | 500-1.000 ລ້ານກີບ | 3 ຄົນຂຶ້ນໄປ | ເຄື່ອນໄຫວໄດ້ໃນຂອບເຂດທົ່ວປະເທດ | ອະນຸຍາດດຳເນີນການສຳຫຼວດ, ອອກແບບ ແລະ/ຫຼື ກໍ່ສ້າງລະບົບຕາຂ່າຍແຕ່ແຮງດັນກາງລົງມາ ແລະ ຕິດຕັ້ງລະບົບໄຟຟ້າໃນອາຄານ. |
| ຊັ້ນ3 | 250-500 ລ້ານກີບ | 1-3ຄົນ ຢ່າງໜ້ອຍ | ເຄື່ອນໄຫວໄດ້ໃນຂອບເຂດທົ່ວປະເທດ | ອະນຸຍາດດຳເນີນການຕິດຕັ້ງ ແລະ ສ້ອມແປງລະບົບໄຟຟ້າໃນອາຄານ ແລະ ການບໍລິການທົ່ວໄປ |

## ໝວດທີ III
## ການກວດກາ ແລະ ການພິຈາລະນາຄຳຮ້ອງ ຂໍ ສ້າງຕັ້ງ ແລະ ດຳເນີນ ວິສະຫາກິດໄຟຟ້າ

**ມາດຕາ 8 ການກວດກາ**

ບົນພື້ນຖານເອກະສານທີ່ໄດ້ປະກອບນັ້ນ ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 4, 5 ແລະ 7 ຕາມຂໍ້ຕົກລົງສະບັບນີ້, ຜູ້ຮ້ອງຂໍ ສ້າງຕັ້ງ ແລະ ດຳເນີນວິສາຫະກິດໄຟຟ້າ ຍັງຈະຕ້ອງໄດ້ຜ່ານການທົດລອບ ແລະ ກວດສອບທາງດ້ານວິຊາການຕາມຄວາມເໝາະສົມຈາກ

ພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ຄວາມຮູ້ພື້ນຖານທາງດ້ານວິຊາການ, ກວດກາສະຖານທີ່, ພາຫານະກົນຈັກແລະອຸປະກອນຮັບໃຊ້ໃນການຂໍສ້າງຕັ້ງແລະດຳເນີນວິສາຫະກິດທຸລະກິດໄຟຟ້າຕາມທີ່ສະເໜີມາ.

ຜົນຂອງການກວດສອບຈະໄດ້ເຮັດເປັນລາຍລັກອັກສອນ(ລາຍລະອຽດແມ່ນກວດກາຕາມແບບຟອມຂັດຕິດ ທີ່ໄດ້ກຳນົດໄວ້).

Time ມາດຕາ 9 ການພິຈາລະນາຄຳຮ້ອງ ຂໍສ້າງຕັ້ງ ແລະ ດຳເນີນ ວິສາຫະກິດໄຟຟ້າ

ຄຳຮ້ອງຂໍສ້າງຕັ້ງ ແລະ ດຳເນີນວິສາຫະກິດໄຟຟ້າຈະໄດ້ຮັບການພິຈາລະນາ ອະນຸມັດ ຫຼື ປະຕິເສດເປັນລາຍລັກອັກສອນພາຍໃນ 7 ວັນ(ວັນລັດຖະການ) ນັບແຕ່ມື້ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

## ໝວດທີ IV
## ການດຳເນີນ, ການນຳໃຊ້ , ການຂໍຕໍ່ອາຍຸ ແລະ ການເກັບຄ່າທຳນຽມ

ມາດຕາ 10 ການດຳເນີນ ວິສາຫະກິດໄຟຟ້າ

ບຸກຄົນ ຫຼື ນິຕິບຸກຄົນຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນວິສາຫະກິດໄຟຟ້າຈະຕ້ອງຂຶ້ນທະບຽນວິສາຫະກິດນຳຂະແໜງການຄ້າ ແລະ ຈົດທະບຽນອາກອນນຳຂະແໜງການເງິນກ່ອນທີ່ຈະສາມາດດຳເນີນກິດຈະການຂອງຕົນໄດ້.

ຫ້າມບຸກຄົນຫຼືນິຕິບຸກຄົນທີ່ບໍ່ໄດ້ຮັບອະນຸຍາດດຳເນີນວິສາຫະກິດໄຟຟ້າຈາກຂະແໜງການພະລັງງານ ແລະ ບໍ່ແຮ່, ດຳເນີນທຸລະກິດໄຟຟ້າໂດຍເດັດຂາດ ແລະ ພ້ອມກັນນັ້ນກໍຫ້າມບຸກຄົນ, ນິຕິບຸກຄົນນັບທັງພາກລັດແລະເອກະຊົນຮັບເອົາຜູ້ທີ່ບໍ່ມີໃບອະນຸຍາດເຂົ້າຮັບເໝົາກໍ່ສ້າງ,ສ້ອມແປງແລະ/ຫຼື ຕິດຕັ້ງໄຟຟ້າ ເພື່ອຮັບໃຊ້ກິດຈະການຂອງຕົນ.

ມາດຕາ 11 ສິດ ຂອງ ຜູ້ທີ່ໄດ້ຮັບອະນຸຍາດດຳເນີນ ວິສາຫະກິດໄຟຟ້າ

ຜູ້ດຳເນີນວິສາຫະກິດໄຟຟ້າມີສິດຕົ້ນຕໍດັ່ງນີ້:

1 ໃນການດຳເນີນ ທຸລະກິດ ຂອງຕົນ;
2. ອຸທອນຄຳຮ້ອງຕໍ່ພາກສ່ວນທີ່ກ່ຽວຂ້ອງໃນເມື່ອການດຳເນີນກິດຈະການຂອງຕົນຫາກບໍ່ໄດ້ຮັບຄວາມເປັນທຳ;
3. ສະເໜີຂໍຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການ, ຂະຫຍາຍກິດຈະການ ຫຼື ຢຸດພັກ, ຢຸດເຊົາ, ລົບລ້າງ, ໂຍກຍ້າຍ, ສືບທອດການດຳເນີນກິດຈະການຂອງຕົນ ຕາມລະບຽບການ;
4. ໄດ້ຮັບຜົນປະໂຫຍດອັນຊອບທຳຈາກການດຳເນີນ ກິດຈະການຂອງຕົນ;

5. ໄດ້ຮັບຄຳແນະນຳຈາກພາກສ່ວນທີ່ກ່ຽວຂ້ອງທາງດ້ານລະບຽບການ, ວິຊາການ ແລະ ເທັກໂນໂລຊີ ກ່ຽວກັບການດຳເນີນ ກິດຈະການຂອງຕົນ, ແລະ
6. ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການ.

## ມາດຕາ 12 ພັນທະຂອງຜູ້ທີ່ໄດ້ຮັບອະນຸຍາດດຳເນີນ ວິສາຫະກິດໄຟຟ້າ

ຜູ້ໄດ້ຮັບອະນຸຍາດດຳເນີນ ວິສາຫະກິດໄຟຟ້າມີພັນທະຕົ້ນຕໍດັ່ງນີ້:

1. ດຳເນີນ ກິດຈະການໃຫ້ຖືກຕ້ອງສອດຄ່ອງກັບສິດຂອບເຂດ ຕາມທີ່ໄດ້ຮັບອະນຸຍາດ;
2. ປະຕິບັດຕາມລະບອບບັນຊີ ແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ການບັນຊີ ວິສາຫະກິດ ຂອງ ສປປ ລາວຢ່າງເຂັ້ມງວດ;
3. ເສຍອາກອນຕົວເລກທຸລະກິດ, ອາກອນກຳໄລ, ອາກອນແຮງງານ-ເງິນເດືອນ ແລະ ພັນທະອື່ນໆ ໃຫ້ລັດຢ່າງຄົບຖ້ວນ ແລະ ທັນເວລາ ຕາມລະບຽບ ກົດໝາຍ;
4. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວ ດຳເນີນກິດຈະການຂອງຕົນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບຢ່າງນ້ອຍ ປີ ລະ 1 ຄັ້ງ. ໂດຍກຳນົດເອົາທ້າຍເດືອນທັນວາ ຂອງທຸກໆ ປີ ເພື່ອສະຫຼຸບ ແລະ ລາຍງານ ປະຈຳປີ;
5. ຈ່າຍຄ່າເສຍຫາຍໃນກໍລະນີການດຳເນີນກິດຈະການຂອງຕົນຫາກກໍ່ຄວາມເສຍຫາຍໃຫ້ແກ່ສິ່ງແວດລ້ອມ,ຊີວິດ ແລະ ຊັບສິນຂອງປະຊາຊົນ , ແລະ
6. ປະຕິບັດພັນທະຕາມ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍໄຟຟ້າ, ກົດໝາຍແຮງງານ ແລະ ກົດໝາຍ ອື່ນໆ ຂອງ ສປປ ລາວ.

## ມາດຕາ 13 ການຕິດປ້າຍ ວິສາຫະກິດ

ບຸກຄົນຫຼືນິຕິບຸກຄົນພາຍຫຼັງທີ່ໄດ້ຮັບອະນຸຍາດໃຫ້ດຳເນີນວິສາຫະກິດໄຟຟ້າ,ຕ້ອງໄດ້ຕິດປ້າຍຊຶ່ງເນື້ອໃນຂອງປ້າຍດັ່ງກ່າວປະກອບດ້ວຍຊື່ວິສາຫະກິດ,ເລກທະບຽນວິສາຫະກິດ, ເຮືອນເລກທີ,ຖະໜົນ,ເມືອງ,ແຂວງ ແລະ ສິ່ງທີ່ເອື້ອອຳນວຍຕ່າງໆໃນການຕິດຕໍ່ ສື່ສານ.

## ມາດຕາ 14 ການນຳໃຊ້ ແລະ ອາຍຸການຂອງໃບອະນຸຍາດ

Expired

14.1 ໃບອະນຸຍາດດຳເນີນວິສາຫະກິດໄຟຟ້າທີ່ອອກອະນຸຍາດໃຫ້ແຕ່ລະເທື່ອແມ່ນ ມີອາຍຸການນຳໃຊ້ 01 ປີ ແຕ່ສາມາດຕໍ່ ອາຍຸໄດ້. ຫ້າມຜູ້ທີ່ໄດ້ຮັບໃບອະນຸຍາດຂາຍລິຂະສິດ, ໂອນ, ຂາຍ ຫຼື ມອບໃຫ້ຜູ້ອື່ນນຳໃຊ້ຢ່າງເດັດ ຂາດ;

14.2 ໃນກໍລະນີຜູ້ທີ່ໄດ້ຮັບໃບອະນຸຍາດດຳເນີນວິສາຫະກິດໄຟຟ້າຢາກຈະສືບຕໍ່ດຳເນີນກິດຈະການ ຈະຕ້ອງຢື່ນໃບຄຳຮ້ອງເປັນລາຍລັກອັກສອນສະເໜີນຳພາກສ່ວນທີ່ກ່ຽວຂ້ອງ, ໃນໄລຍະລໍຖ້າຄຳຕອບຈາກພາກສ່ວນທີ່ກ່ຽວຂ້ອງນັ້ນແມ່ນຍັງມີສິດດຳເນີນທຸລະກິດເປັນປົກກະຕິ ຈົນ ກ່ວາຈະໄດ້ຮັບຄຳຕອບເປັນລາຍລັກອັກສອນຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 15** ເງື່ອນໄຂການອະນຸຍາດໃຫ້ ສືບຕໍ່ອາຍຸການດຳເນີນວິສາຫະກິດໄຟຟ້າ

ຜູ້ທີ່ໄດ້ຮັບໃບອະນຸຍາດດຳເນີນວິສາຫະກິດໄຟຟ້າກ່ອນຈະໄດ້ຮັບອະນຸຍາດໃຫ້ສືບຕໍ່ອາຍຸການດຳເນີນວິສາຫະກິດຂອງຕົນຈະຕ້ອງໄດ້ປະຕິບັດພັນທະຕາມທີ່ໄດ້ກຳນົດໄວ້ໃນມາດຕາ12 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີຖ້າຫາກວິສາຫະກິດໃດຫາກບໍ່ໄດ້ ປະຕິບັດຕາມພັນທະຂໍ້ໃດໜຶ່ງຕາມທີ່ກຳນົດ ໄວ້ໃນມາດຕາ12 ຂອງຂໍ້ຕົກລົງສະບັບນີ້, ຖືວ່າຈະບໍ່ຮັບພິຈາລະນາໃນການຂໍສືບຕໍ່ອາຍຸຂອງໃບອະນຸຍາດດຳເນີນວິສາຫະກິດໄຟຟ້າຂອງຕົນ

**ມາດຕາ 16** ຄຳຮ້ອງຂໍສືບຕໍ່ອາຍຸ ການດຳເນີນ ວິສາຫະກິດ ໄຟຟ້າ

Doc for renew

ຜູ້ທີ່ໄດ້ຮັບໃບອະນຸຍາດດຳເນີນວິສາຫະກິດໄຟຟ້າທີ່ມີຈຸດປະສົງຢາກຂໍສືບຕໍ່ອາຍຸການຂອງໃບອະນຸຍາດດຳເນີນວິສາຫະກິດໄຟຟ້າຂອງຕົນຈະຕ້ອງໄດ້ປະກອບເອກະ ສານດັ່ງນີ້:

16.1 ໃບຄຳຮ້ອງ( ຂຽນຕາມ ຕົວຢ່າງແບບຟອມຂັດຕິດທີ 01);

16.2 ໃບຢັ້ງຢືນ ການເສຍພັນທະອາກອນຈາກລັດ;

16.3 ບົດສະຫຼຸບການເຄື່ອນໄຫວວຽກງານໃນໄລຍະ1ປີຜ່ານມາ(ຂຽນຕາມຕົວຢ່າງແບບຟອມຂັດຕິດທີ 12).

ພາຍຫຼັງທີ່ພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບສຳນວນຄຳຮ້ອງຄົບຖ້ວນຕາມທີ່ໄດ້ ກຳນົດໄວ້ ໃນຂໍ້ 16.1; 16.2 ແລະ 16.3 ຂອງມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຈະໄດ້ຮັບການພິຈາລະນາອະນຸມັດ ຫຼືປະຕິເສດການສືບຕໍ່ອາຍຸການຂອງໃບອະນຸຍາດພາຍໃນ 7 ວັນ (ເຈັດວັນລັດຖະການ)ນັບແຕ່ມື້ໄດ້ ຮັບຄຳຮ້ອງເປັນຕົ້ນໄປ.

renew

ຄຳຮ້ອງຂໍສືບຕໍ່ອາຍຸໃບອະນຸຍາດດຳເນີນວິສາຫະກິດໄຟຟ້າຈະຕ້ອງຍື່ນສະເໜີໃຫ້ພາກ ສ່ວນທີ່ກ່ຽວຂ້ອງກ່ອນໜ້າ 30 ວັນກ່ອນທີ່ໃບອະນຸຍາດດຳເນີນກິດຈະການສະບັບເດີມຈະໝົດອາຍຸ.

ໃນເມື່ອ ໃບອະນຸຍາດ ດຳເນີນ ກິດຈະການ ຫາກໝົດອາຍຸ ກາຍກຳນົດ ສາມເດືອນ ແລ້ວ ແຕ່ຜູ້ດຳເນີນກິດຈະການບໍ່ ສະເໜີສືບຕໍ່ອາຍຸຂອງໃບອະນຸຍາດ ແມ່ນຖືວ່າຜູ້ດຳເນີນກິດຈະການໝົດສິດໃນການດຳເນີນ ກິດຈະການຂອງຕົນ.

**ມາດຕາ 17** ການເກັບຄ່າທຳນຽມ

ການເກັບຄ່າທຳນຽມໃນການອອກໃບອະນຸຍາດດຳເນີນໄຟຟ້າ ແມ່ນ ອີງຕາມຂັ້ນ ຂອງວິສາຫະກິດ ກ່ຽວກັບທຸລະກິດໄຟຟ້າ ແລະ ທຶນຈົດທະບຽນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເຊັ່ນ:

Fees

17.1 ໃບອະນຸຍາດດຳເນີນກິດຈະການສຳລັບວິສາຫະກິດໄຟຟ້າ ຊັ້ນ 1 ແມ່ນ 1.000.000 ກີບ, ສຳລັບວິສາຫະກິດໄຟຟ້າ ຊັ້ນ 2 ແມ່ນ 600.000 ກີບ, ແລະ ສຳລັບວິສາຫະກິດ ໄຟຟ້າ ຊັ້ນ 3 ແມ່ນ 300.000 ກີບ.

17.2 ສຳລັບໃບອະນຸຍາດໃຫ້ສືບຕໍ່ການດຳເນີນກິດຈະການຂອງແຕ່ລະຊັ້ນວິສາຫະກິດໄຟຟ້ານັ້ນໃຫ້ປະຕິບັດຕາມ ຂໍ້ ທີ 17.1. ໃນກໍລະນີ ທຶນຈົດທະບຽນຂອງວິສາຫະກິດໄຟຟ້າແຕ່ລະຊັ້ນຫາກຫຼາຍກ່ວາຈຳນວນທີ່ໄດ້ກຳນົດໄວ້ໃນມາດຕາ7,ການເກັບຄ່າທຳນຽມແມ່ນປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ຫຼື ຂໍ້ກຳນົດຂອງລັດຖະມົນຕີວ່າການກະຊວງ ການເງິນວ່າດ້ວຍການເກັບຄ່າທຳນຽມ.

## ໝວດທີ V

## ການຂະຫຍາຍກິດຈະການ

### ມາດຕາ 18 ການຂະຫຍາຍກິດຈະການ

ຫ້າມບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດດຳເນີນ ວິສາຫະກິດໄຟຟ້າຂະຫຍາຍ ກິດຈະການຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ.

### ມາດຕາ 19 ເງື່ອນໄຂການຂະຫຍາຍກິດຈະການ

ຜູ້ທີ່ດຳເນີນວິສາຫະກິດ ທຸລະກິດໄຟຟ້າ ຢາກຂະຫຍາຍ ກິດຈະການຂອງຕົນຈະຕ້ອງ ມີເງື່ອນໄຂດັ່ງນີ້:

1. ມີປະຫັວດໃນການດຳເນີນ ກ່ຽວກັບກິດທຸລະກິດໄຟຟ້າ ດີ ແລະ ໜ້າເຊື່ອຖືໄດ້;
2. ມີຄວາມສາມາດທາງດ້ານການເງິນ ແລະ ຄວາມສາມາດທາງດ້ານເຕັກນິກຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງ ຂໍ້ຕົກລົງສະບັບນີ້;
3. ມີປະສົບການໃນການດຳເນີນທຸລະກິດ ກ່ຽວກັບທຸລະກິດໄຟຟ້າ ຢ່າງນ້ອຍ 5 ປີ;
4. ປະຕິບັດພັນທະຕາມທີ່ກຳນົດໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

### ມາດຕາ 20 ການປະກອບເອກະສານຂໍຂະຫຍາຍກິດຈະການ

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດດຳເນີນ ວິສາຫະກິດໄຟຟ້າໃດໜຶ່ງມາກ່ອນ ແລ້ວມີຈຸດປະສົງຢາກຂະຫຍາຍກິດຈະການຂອງຕົນຈະຕ້ອງໄດ້ປະກອບເອກະສານຕາມ ມາດຕາ 5 ຂອງ ຂໍ້ຕົກລົງສະບັບນີ້.

### ມາດຕາ 21 ການພິຈາລະນາຄຳຮ້ອງຂໍຂະຫຍາຍກິດຈະການ

ທຸກໆ ຂັ້ນຕອນການກວດກາ ແລະ ກວດການ ຕໍ່ຄຳຮ້ອງຂໍຂະຫຍາຍກິດຈະການ ແມ່ນໃຫ້ປະຕິບັດຕາມ ມາດຕາ 8 ຂອງ ຂໍ້ຕົກລົງສະບັບນີ້.

ສ່ວນໄລຍະເວລາ ການພິຈາລະນາ ສຳນວນຄຳຮ້ອງ ຂໍຂະຫຍາຍກິດຈະການດັ່ງກ່າວ ແມ່ນໃຫ້ປະຕິບັດຕາມ ມາດຕາ ທີ 9 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 22 ການສ້າງຕັ້ງ ສາຂາ

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບການອະນຸຍາດໃຫ້ດຳເນີນວິສາຫະກິດໄຟຟ້າມີຈຸດປະສົງຢາກສ້າງຕັ້ງສາຂາຈະຕ້ອງໄດ້ຮັບການອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ, ການປະກອບຄຳຮ້ອງຂໍສ້າງຕັ້ງສາຂາແມ່ນໃຫ້ປະຕິບັດຕາມ ມາດຕາ 5 ແລະ ເງື່ອນໄຂຕ່າງໆແມ່ນໃຫ້ປະຕິບັດ ຕາມມາດຕາ 4, ການກວດກາ ແລະ ການ ພິຈາລະນາ ຄຳຮ້ອງ ແມ່ນ ໃຫ້ປະຕິບັດຕາມ ມາດຕາ8 ແລະ 9 ຂອງ ຂໍ້ຕົກລົງສະບັບນີ້. ການປະກອບເອກະສານນອກຈາກ ທີ່ໄດ້ລະບຸໄວ້ ໃນມາດຕາ 5 ແລ້ວຍັງຈະຕ້ອງໄດ້ປະກອບມີໃບທະບຽນວິສາຫະກິດ, ໃບທະບຽນອາກອນ,ໃບອະນຸຍາດດຳເນີນ ກິດຈະການ, ລະບຽບການ ແລະ ພັນທະຜູກພັນກັບ ບໍລິສັດ ແມ່ທີ່ໄດ້ຮັບອະນຸຍາດມາກ່ອນເພື່ອຂັດຕິດກັບສຳນວນຄຳຮ້ອງ.

ສ່ວນການພິຈາລະນາອະນຸມັດຫຼື ລຶບລ້າງສ່ວນທີ່ເປັນສາຂາແມ່ນໃຫ້ປະຕິບັດຕາມ ມາດຕາ 32.7 ແລະ 32.8 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 23 ການສ້າງຕັ້ງຫ້ອງການຕົວແທນ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດໃຫ້ ດຳເນີນວິສາຫະກິດໄຟຟ້າມີຈຸດປະສົງຢາກສ້າງຕັ້ງຫ້ອງການຕົວແທນ ຈະຕ້ອງໄດ້ປະກອບຄຳຮ້ອງພ້ອມດ້ວຍໃບທະບຽນວິສາຫະກິດ, ໃບອາກອນ ແລະ ໃບອະນຸຍາດດຳເນີນທຸລະກິດໄຟຟ້າທີ່ໄດ້ຮັບອະນຸຍາດເພື່ອນຳສະເໜີ ໃຫ້ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງບ່ອນທີ່ຕົນຢາກສ້າງຕັ້ງຫ້ອງການຕົວແທນ.

ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງເມື່ອໄດ້ຮັບສຳນວນຄຳຮ້ອງການຂໍສ້າງຕັ້ງຫ້ອງການຕົວແທນຈະຕ້ອງໄດ້ພິຈາລະນາ ແລະ ໃຫ້ຄຳຕອບ ພາຍໃນ 7 ວັນ( ວັນລັດຖະການ) ນັບແຕ່ວັນທີໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

### ມາດຕາ 24 ການເຄື່ອນໄຫວ ຂອງ ພາກສ່ວນທີ່ເປັນສາຂາ ຫຼື ຫ້ອງການຕົວແທນ

ການເຄື່ອນໄຫວຂອງພາກສ່ວນທີ່ເປັນສາຂາຈະຕ້ອງໄດ້ມີລະບຽບການ, ມີສັນຍາຜູກພັນຕ່າງຫາກກັບບໍລິສັດແມ່ໂດຍການແບ່ງຄວາມຮັບຜິດຊອບກັນຢ່າງລະອຽດແລະຈະແຈ້ງ.ພາກສ່ວນທີ່ເປັນສາຂາອະນຸຍາດໃຫ້ມີກາປະທັບເປັນຂອງຕົນເອງ ແລະ ມີການເຄື່ອນໄຫວຕາມຮູບແບບວິສາຫະກິດ.

ທຸກການເຄື່ອນໄຫວຂອງພາກສ່ວນທີ່ເປັນຫ້ອງການຕົວແທນແມ່ນຢູ່ພາຍໃຕ້ການຊີ້ນຳ ນຳພາ ແລະ ຄວາມຮັບຜິດຊອບທັງໝົດຂອງບໍລິສັດ ແມ່.

## ໝວດ VI

## ການປ່ຽນຊື່, ການເສຍຫາຍ, ການຍົກຍ້າຍ, ການສືບທອດ, ການຢຸດເຊົາ, ການຢຸດພັກ, ການສັ່ງຢຸດເຊົາ ແລະ ການຖອນໃບອະນຸຍາດດຳເນີນທຸລະກິດໄຟຟ້າ

### ມາດຕາ 25 ການປ່ຽນຊື່

ຜູ້ທີ່ໄດ້ຮັບໃບອະນຸຍາດ ດຳເນີນ ວິສາຫະກິດ ໄຟຟ້າ ມີຈຸດປະສົງຢາກປ່ຽນຊື່ ວິສາຫະກິດ ແລະ ຫຼື ຊື່ຜູ້ທີ່ໄດ້ຮັບໃບອະນຸຍາດມາກ່ອນແລ້ວ ຈະຕ້ອງຂຽນໃບຄຳຮ້ອງສະແດງເຈດຈຳນົງສະເໜີ ພາກສ່ວນກ່ຽວຂ້ອງ ເພື່ອພິຈາລະນາ ແລະ ອະນຸມັດ.

### ມາດຕາ 26 ການເສຍຫາຍ ແລະ ການຍົກຍ້າຍ

ໃນກໍລະນີ ໃບອະນຸຍາດດຳເນີນ ວິສາຫະກິດ ແລະ/ຫຼື ໃບທະບຽນວິສາຫະກິດ ຂອງຕົນ ຫາກສູນຫາຍ ຫຼື ຖືກທຳລາຍ, ໃຫ້ຜູ້ໄດ້ຮັບໃບອະນຸຍາດຍື່ນຄຳຮ້ອງສະເໜີໃຫ້ພາກສ່ວນກ່ຽວຂ້ອງ ພາຍໃນ 60 ວັນ ນັບແຕ່ວັນທີ ສູນຫາຍ ຫຼື ຖືກທຳລາຍ ເພື່ອໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາ ອອກໃບອະນຸຍາດດັ່ງກ່າວໃຫ້ໃໝ່. ສ່ວນການພິຈາລະນາອອກໃບອະນຸຍາດສະບັບໃໝ່ ແມ່ນຕໍ່າສຸດບໍ່ເກີນໜຶ່ງ(1 ) ອາທິດ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ.

ໃນກໍລະນີຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດໄຟຟ້າ ຢາກຍົກຍ້າຍທີ່ຕັ້ງວິສາຫະກິດຂອງຕົນໄປຕັ້ງຢູ່ສະຖານທີ່ອື່ນ, ກ່ອນຈະຍົກຍ້າຍຈະຕ້ອງໄດ້ແຈ້ງ ໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບ ຊາບ ເປັນລາຍລັກອັກສອນ.

ສ່ວນການປະກອບເອກະສານສຳລັບການຍົກຍ້າຍສະຖານທີ່ຕັ້ງວິສາຫະກິດແມ່ນໃຫ້ ປະຕິບັດຕາມມາດຕາ 5 ຂອງ ຂໍ້ຕົກລົງສະບັບນີ້ ເພື່ອນຳສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໃນເວລາຂໍສືບຕໍ່ອາຍຸການຂອງໃບອະນຸຍາດ.

### ມາດຕາ 27 ການສືບທອດ

27.1. ໃນກໍລະນີຜູ້ໄດ້ຮັບໃບອະນຸຍາດດຳເນີນ ວິສາຫະກິດໄຟຟ້າ ເສຍຊີວິດ ໃຫ້ຜູ້ມີສິດສືບທອດຍື່ນຄຳຮ້ອງສະເໜີ ໃຫ້ ພາກສ່ວນກ່ຽວຂ້ອງ ເພື່ອຮັບຮູ້ໃນການສືບທອດ ພາຍໃນ 60 ວັນ ນັບແຕ່ວັນທີ ຜູ້ໄດ້ຮັບໃບອະນຸຍາດ ເດີມ ເສຍຊີວິດ.

27.2. ໃນກໍລະນີບໍ່ສາມາດຍື່ນຄຳຮ້ອງຂໍ ສືບທອດພາຍໃນເວລາ 90 ວັນ ໃຫ້ຖືວ່າໃບອະນຸຍາດດຳເນີນທຸລະກິດໄຟຟ້າດັ່ງກ່າວ ໝົດອາຍຸໃຊ້ງານ. ໃນກໍລະນີຢາກດຳເນີນກິດຈະການຕໍ່ໄປໃຫ້ປະກອບເອກະສານ ຕາມມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ເພື່ອສະເໜີ ໃຫ້ພາກສ່ວນກ່ຽວຂ້ອງ ພິຈາລະນາ ແລະ ອະນຸຍາດ.

**ມາດຕາ 28 ການຢຸດເຊົາ ແລະ ຢຸດພັກ**

ໃນເມື່ອຜູ້ທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດໄຟຟ້າມີຈຸດປະສົງຢາກຢຸດເຊົາກິດຈະການຂອງຕົນຈະຕ້ອງຍື່ນຄຳຮ້ອງເປັນລາຍລັກອັກສອນ ໂດຍລະບຸສາຍເຫດ ຫຼື ເຫດຜົນທີ່ຢາກຢຸດເຊົາກິດຈະການໃຫ້ ພາກສ່ວນກ່ຽວຂ້ອງພາຍໃນ 30 ວັນ ກ່ອນການຢຸດເຊົາ ກິດຈະການ.

ໃນກໍລະນີຢາກຢຸດພັກການດຳເນີນກິດຈະການເປັນການ ຊົ່ວຄາວດ້ວຍເຫດຜົນໃດໜຶ່ງຈະຕ້ອງລາຍງານເປັນລາຍລັກອັກສອນໃຫ້ພາກສ່ວນທີ່ກ່ຽວຂ້ອງພາຍໃນ 60 ວັນກ່ອນຈະຢຸດພັກການດຳເນີນກິດຈະການຂອງຕົນ.

ເມື່ອຢາກດຳເນີນກິດຈະການຄືນໃໝ່ກໍ່ໃຫ້ລາຍງານເປັນລາຍລັກອັກສອນຕໍ່ພາກສ່ວນທີ່ກ່ຽວຂ້ອງ ກ່ອນທີ່ຈະດຳເນີນກິດຈະການຄືນໃໝ່.

**ມາດຕາ 29 ການສັ່ງຢຸດເຊົາ ແລະ ການຖອນໃບອະນຸຍາດ**

ອົງການຄຸ້ມຄອງ ວິສາຫະກິດໄຟຟ້າ ມີອຳນາດສັ່ງການໃຫ້ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດໄຟຟ້າຢຸດເຊົາແລະຖອນໃບອະນຸຍາດໃນການເຄື່ອນໄຫວກິດຈະການດ້ວຍສາຍ ເຫດ ແລະ/ ຫຼື ດ້ວຍການກະທຳຜິດໃດໜຶ່ງດັ່ງນີ້:

29.1 ບໍ່ປະຕິບັດພັນທະໃດໜຶ່ງຕາມທີ່ໄດ້ກຳນົດໄວ້ ໃນຂໍ້ຕົກລົງສະບັບນີ້ ແລະ/ຫຼື ບັນດາລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;

29.2 ດຳເນີນກິດຈະການ ຂາດທຶນ, ວິຊາການ ແລະ ດຳເນີນກິດຈະການໃນລັກສະນະຮູບແບບ ບໍລິສັດບໍ່ມີຕົວຕົນ;

29.3 ມີການລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການຂອງລັດທີ່ກ່ຽວຂ້ອງ ພ້ອມທັງໄດ້ຖືກລົກ ສາ ອົບຮົມ ແຕ່ບໍ່ຍອມຮັບ ຫຼື ບໍ່ຍອມປ່ຽນແປງ;

29.4 ດຳເນີນກິດຈະການ ນອກເໜືອການອະນຸຍາດທີ່ໄດ້ຮັບ;

29.5 ດຳເນີນກິດຈະການ ພາໃຫ້ ມີຄົນເສຍຊີວິດ, ເສຍສຸຂະພາບ, ເສຍອົງຄະ ຫຼື ກໍ່ຄວາມເສຍຫາຍໃຫ້ແກ່ ຊັບສິນຂອງລັດ, ລວມໝູ່ ຫຼື ຂອງປະຊາຊົນ ຢ່າງຮ້າຍແຮງ;

29.6 ດຳເນີນກິດຈະການເພື່ອຫາຜົນປະໂຫຍດສ່ວນຕົວ ໂດຍບໍ່ຊອບທຳ;

29.7 ດຳເນີນກິດຈະການ ບໍ່ສອດຄ່ອງ ແລະ/ຫຼື ລະເມີດກັບລະບຽບກົດໝາຍຂອງລັດ ຫຼື ມີການ ເຄື່ອນໄຫວທີ່ຂັດຕໍ່ແນວທາງນະໂຍບາຍຂອງພັກ ແລະ ລັດ;

29.8 ມີການຮ້ອງຂໍຢຸດເຊົາການດຳເນີນກິດຈະການຍ້ອນເຫດຜົນສ່ວນຕົວຫຼືເຈົ້າຂອງບໍລິສັດ ເສຍ ຊີວິດ.

29.9 ກ່ອນຈະສັ່ງຢຸດເຊົາ ແລະ ຖອນໃບອະນຸຍາດພາກສ່ວນທີ່ກ່ຽວຂ້ອງຕ້ອງຕັ້ງຄະນະກຳມະການກວດກາກວດການ ຢ່າງລະອຽດ,ພ້ອມທັງໃຫ້ໂອກາດຜູ້ທີ່ໄດ້ຮັບໃບອະນຸຍາດມີໂອກາດຍື່ນຄຳຮ້ອງເພື່ອແກ້ຂໍ້ກ່າວຫາຕ່າງໆ.

ການສັ່ງຢຸດເຊົາ ແລະ ຖອນໃບອະນຸຍາດຈະບໍ່ກະທົບເຖິງໂຄງການທີ່ກຳລັງດຳເນີນຢູ່ຕາມຂໍ້ຜູກພັນໃນສັນຍາກັບເຈົ້າຂອງໂຄງການ, ຖ້າຫາກການກະທຳຜິດດັ່ງກ່າວຫາກບໍ່ມີສ່ວນພົວພັນກັບໂຄງການດັ່ງກ່າວ.

## ໝວດທີ VII

## ການຄຸ້ມຄອງ, ກວດກາ ແລະ ກວດການດຳເນີນ ວິສາຫະກິດ ທຸລະກິດໄຟຟ້າ

**ມາດຕາ 30** ອົງການຄຸ້ມຄອງ, ກວດກາ, ກວດການ ການດຳເນີນວິສາຫະກິດໄຟຟ້າ

ອົງການຄຸ້ມຄອງ, ກວດກາ ແລະ ກວດການ ວິສາຫະກິດໄຟຟ້າປະກອບມີດັ່ງນີ້:

1. ກະຊວງ ພະລັງງານ ແລະ ບໍ່ແຮ່;
2. ພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ;
3. ຫ້ອງການ ພະລັງງານ ເມືອງ, ແລະ
4. ອຳນາດການປົກຄອງບ້ານ.

**ມາດຕາ 31** ສິດ ແລະ ໜ້າທີ່ຂອງກະຊວພະລັງງານ ແລະ ບໍ່ແຮ່

ໃນການຄຸ້ມຄອງ, ກວດກາ, ກວດການຕໍ່ຜູ້ດຳເນີນ ວິສາຫະກິດໄຟຟ້າ ກະຊວງ ພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ ດັ່ງນີ້:

31.1 ສ້າງ, ປັບປຸງ, ຂໍ້ກຳນົດ ແລະ ລະບຽບການກ່ຽວກັບການຄຸ້ມຄອງ, ກວດກາ ກວດການ ການດຳເນີນວິສາຫະກິດ ໄຟຟ້າຕາມພາລະບົດບາດຂອງຕົນ;

31.2 ປະສານສົມທົບກັບຂະແໜງການຂັ້ນທ້ອງຖິ່ນເພື່ອລົງຕິດຕາມ,ກວດກາ,ກວດການໃນເຄື່ອນໄຫວຂອງ ວິສາຫະກິດໄຟຟ້າ;

31.3 ຮັບ ແລະ ຄົ້ນຄ້ວາພິຈາລະນາກ່ຽວກັບຄຳຮ້ອງການອຸທອນ ຂອງບັນດາວິສາຫະກິດທີ່ດຳເນີນທຸລະກິດໄຟຟ້າແລະ/ຫຼືຈາກຂະແໜງການຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ;

31.4 ຮັບ,ທວງບົດລາຍງານການເຄື່ອນໄຫວດຳເນີນວິສາຫະກິດໄຟຟ້າໃນແຕ່ລະໄລຍະຈາກຂະແໜງການຂັ້ນທ້ອງຖິ່ນນັບທັງພາກລັດ ແລະ ເອກະຊົນທີ່ຢູ່ພາຍໃຕ້ ການຄຸ້ມຄອງຂອງ ຕົນ;

31.5 ຄົ້ນຄ້ວາ, ໃຫ້ຄຳແນະນຳ, ຄຳປຶກສາ, ຊຸກຍູ້ ແລະ ສົ່ງເສີມການດຳເນີນວິສາຫະກິດ ໄຟຟ້າດ້ວຍຮູບການຕ່າງໆ ;

31.6 ສະຫຼຸບສັງລວມສະຖິຕິ, ຂໍ້ມູນ ແລະ ຂ່າວສານຕ່າງໆ ກ່ຽວກັບການດຳເນີນກິດຈະການຂອງວິສາຫະກິດໄຟຟ້າເພື່ອລາຍງານຂັ້ນເທິງຂອງຕົນ, ແລະ

31.7 ອອກໃບອະນຸຍາດ ຫຼື ລົບລ້າງ, ສັ່ງໂຈະ, ຢຸດເຊົາ, ຕໍ່ອາຍຸການຂອງໃບອະນຸຍາດດຳເນີນທຸລະກິດໄຟຟ້າປະເພດຂັ້ນ 1, ທຸລະກິດທີ່ປຶກສາດ້ານກິດຈະການໄຟຟ້າ ແລະ/ຫຼື ສັ່ງໂຈະ, ລົບລ້າງ, ຢຸດເຊົາ ທຸລະກິດໄຟຟ້າທີ່ເປັນປະເພດຂັ້ນ 2 ແລະ ຂັ້ນ 3;

31.8 ປະສານສົມທົບກັບພາກສ່ວນອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງໃນການກວດກາ, ກວດການການດຳເນີນທຸລະກິດ ຂອງວິສາຫະກິດໄຟຟ້າຕາມສິດ ແລະ ພາລະບົດບາດຂອງ ຕົນ;

ມາດຕາ 32 ສິດ ແລະ ໜ້າທີ່ ຂອງ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງ, ກວດກາ, ກວດການຕໍ່ຜູ້ດຳເນີນວິສາຫະກິດໄຟຟ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ດັ່ງນີ້:

32.1 ຄຸ້ມຄອງຢ່າງຮອບດ້ານ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເພື່ອຕິດຕາມ, ກວດກາ, ກວດການຕໍ່ຜູ້ທີ່ດຳເນີນວິສາຫະກິດໄຟຟ້າ ຊັ້ນ1, ຊັ້ນ 2 ແລະ ຊັ້ນ 3 ຕາມສິດໜ້າທີ ແລະ ພາລະບົດບາດໃນຂອບເຂດທີ່ຕົນຮັບຜິດຊອບ;

32.2 ຄົ້ນຄ້ວາປະກອບຄຳເຫັນດ້ານວິຊາການກ່ຽວກັບການຂໍດຳເນີນ, ຂະຫຍາຍ, ຕໍ່ອາຍຸການ, ຫຼືລົບລ້າງໃບອະນຸຍາດດຳເນີນ ວິສາຫະກິດໄຟຟ້າ ຊັ້ນ 1 ແລະ/ຫຼື ທີ່ປຶກສາ ໃນຂອບເຂດທີ່ຕົນຮັບຜິດຊອບຕາມ ພາລະບົດບາດເພື່ອນຳສະເໜີ ໃຫ້ຂະແໜງການທີ່ກ່ຽວຂ້ອງຂອງຕົນພິຈາລະນາອະນຸມັດ;

32.3 ອອກ ຫຼື ລົບລ້າງ,ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດໄຟຟ້າຊັ້ນ 2 ແລະ ຊັ້ນ3 ຕາມສິດຂອບເຂດທີ່ຕົນຮັບຜິດຊອບ;

32.4 ສະຫຼຸບສັງລວມ, ສະຖິຕິ ແລະ ຂໍ້ມູນ ຕ່າງໆ ກ່ຽວກັບການດຳເນີນວິສາຫະກິດໄຟຟ້າໃນຂອບເຂດຕົນຮັບຜິດຊອບເພື່ອລາຍງານເປັນແຕ່ລະໄລຍະໃຫ້ຂັ້ນນຳຂອງຕົນຮັບຊາບຢ່າງນ້ອຍປີ ລະ 1 ຄັ້ງ;

32.5 ເຜີຍແຜ່ຂໍ້ຕົກລົງ,ລະບຽບການ ແລະ ກົດໝາຍ ທີ່ພົວພັນກັບການດຳເນີນວິສາຫະກິດໄຟຟ້າໃນຂອບເຂດທີ່ຕົນຮັບຜິດຊອບ;

32.6 ສະເໜີອອກຫຼືປັບປຸງຫຼືລົບລ້າງລະບຽບການຕ່າງໆທີ່ພົວພັນກັບການດຳເນີນວິສາຫະກິດໄຟຟ້າ;

32.7 ຄົ້ນຄ້ວາພິຈາລະນາ ສຳນວນຄຳຮ້ອງ ຂໍສ້າງຕັ້ງສາຂາ ຫຼື ການສ້າງຕັ້ງຫ້ອງການຕົວແທນຂອງບຸກຄົນຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດດຳເນີນໄຟຟ້າພາຍໃນ ແຂວງ ຂອງຕົນ ແລະ/ຫຼື ອະນຸມັດ, ແລ້ວລາຍງານໃຫ້ຂັ້ນເທິງຂອງຕົນໄດ້ຮັບຊາບ;

32.8 ລົບລ້າງ ຫຼື ສັ່ງຢຸດເຊົາການດຳເນີນທຸລະກິດໄຟຟ້າ ຂອງພາກສ່ວນ ທີ່ເປັນສາຂາ ຫຼື ຕົວແທນ ແລະ ປະຕັງຊັ້ນ 2 ແລະ ຊັ້ນ 3 ທີ່ໄດ້ຮັບອະນຸຍາດໃນຂອບເຂດການຄຸ້ມຄອງຂອງຕົນແລ້ວລາຍງານໃຫ້ຂັ້ນເທິງຂອງ ຕົນໄດ້ຮັບຊາບ, ແລະ

32.9 ປະຕິບັດສິດ ແລະ ໜ້າທີ່ອື່ນໆໃນການຄຸ້ມຄອງແລະກວດກາວິສາຫະກິດໄຟຟ້າ ຕາມການມອບໝາຍຂອງ ກະຊວງ ພະລັງງານ ແລະ ບໍ່ແຮ່ ແລະ ອຳນາດການປົກຄອງທ້ອງຖິ່ນ.

ມາດຕາ 33 ສິດ ແລະ ໜ້າທີ່ ຂອງຫ້ອງການ ພະລັງງານແລະ ບໍ່ແຮ່ ປະຈຳ ເມືອງ.

ໃນການຄຸ້ມຄອງ, ກວດກາຕໍ່ຜູ້ດຳເນີນວິສະຫະກິດໄຟຟ້າ ຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້ :

33.1 ນຳເອົາລະບຽບການ, ຂໍ້ແນະນຳຕ່າງໆ ທີ່ພົວພັນເຖິງວິສາຫະກິດໄຟຟ້າ ເພື່ອແຈ້ງ ແລະ ແນະນຳໃຫ້ຜູ້ດຳເນີນທຸລະກິດໄຟຟ້າໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

33.2 ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດໄຟຟ້າຂອງວິສາຫະກິດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

33.3 ຕິດຕາມ,ເກັບກຳການເຄື່ອນໄຫວຕ່າງໆ ຂອງວິສະຫະກິດທີ່ດຳເນີນທຸລະກິດໄຟຟ້າໃນຂອບເຂດຄວາມຮັບຜິດຊອບຂອງຕົນແລ້ວລາຍງານໃຫ້ຂັ້ນເທິງຂອງຕົນຮັບຊາບ;

33.4 ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການຄຸ້ມຄອງຕໍ່ຜູ້ດຳເນີນວິສາຫະກິດທຸລະກິດໄຟຟ້າຕາມການມອບໝາຍຂອງພະແນກ ພະລັງງານ ແລະ ບໍ່ແຮ່;

## ມາດຕາ 34 ສິດ ແລະ ໜ້າທີ່ຂອງອຳນາດການປົກຄອງບ້ານ.

ໃນການຕິດຕາມ ແລະ ກວດກາຜູ້ດຳເນີນ ວິສາຫະກິດທຸລະກິດໄຟຟ້າ ອຳນາດການປົກຄອງບ້ານ ມີສິດ ແລະ ໜ້າທີ່ດັ່ງນີ້:

34.1 ຕິດຕາມຕໍ່ຜູ້ດຳເນີນ ທຸລະກິດໄຟຟ້າ ທີ່ຕັ້ງຢູ່ໃນຂອບເຂດບ້ານຂອງຕົນ;

34.2 ສະເໜີ ແລະ ລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງ ເມື່ອເຫັນວ່າຜູ້ທີ່ດຳເນີນ ວິສາຫະກິດໄຟຟ້າ ມີການກະທຳຜິດຕໍ່ລະບຽບການ ຫຼື ແຕະຕ້ອງເຖິງສິດຜົນປະໂຫຍດຂອງປະຊາຊົນ, ຮີດຄອງປະເພນີອັນດີງາມຂອງຊາດ;

34.3 ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ກັບ ວິສາຫະກິດທີ່ດຳເນີນທຸລະກິດໄຟຟ້າ ໃນຂອບເຂດທີ່ຕົນຮັບຜິດຊອບ

34.4 ໃຫ້ຄວາມຮ່ວມມື ແລະ ປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ໃນການກວດກາ ແລະ ກວດການຕໍ່ຜູ້ທີ່ດຳເນີນວິສາຫະກິດທຸລະກິດໄຟຟ້າ, ແລະ

34.5 ປະສານສົມທົບກັບຜູ້ດຳເນີນວິສາຫະກິດທຸລະກິດໄຟຟ້າ ໃນການປົກປັກຮັກສາຄວາມສະຫງົບພາຍໃນຂອບເຂດບ້ານຂອງຕົນ;

# ໝວດທີ VIII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 35 ນະໂຍບາຍຕໍ່ຜູ້ມີຜົນງານ.

ມາດຕາ 36 ມາດຕະການຕໍ່ຜູ້ລະເມີດ

ຜູ້ລະເມີດຂໍ້ຕົກລົງສະບັບນີ້ ໃນການດຳເນີນວິສາຫະກິດໄຟຟ້າ ຈະຖືກປະຕິບັດມາດຕະການຕົ້ນຕໍດັ່ງນີ້:

36.1 ມາດຕະການສຶກສາອົບຮົມ;

36.2 ມາດຕະການປັບໃໝ, ແລະ

36.3. ມາດຕະການທາງອາຍາ.

ນອກນີ້ຜູ້ລະເມີດຈະຖືກປະຕິບັດໂທດເພີ້ມອີກ: ງົດການດຳເນີນວິສາຫະກິດໄຟຟ້າ, ຖອນໃບອະນຸຍາດ, ຮິບພາຫະນະ ຫຼື ອຸປະກອນທີ່ໃຊ້ໃນການກະທຳຜິດ.

ມາດຕາ 37 ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ນິຕິບຸກຄົນທີ່ດຳເນີນວິສາຫະກິດໄຟຟ້າດ້ວຍການກະທຳດັ່ງຕໍ່ໄປນີ້ຈະຖືກສຶກສາອົບຮົມ ເຊັ່ນ:

37.1 ບໍ່ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ກ່ຽວຂ້ອງໃນການຕິດຕາມ ແລະ ກວດກາວິສາຫະກິດ ຂອງຕົນ;

37.2 ບໍ່ປະຕິບັດຕາມມາດຕະຖານເຕັກນິກ ທີ່ກໍ່ໃຫ້ເກີດອັນຕະລາຍ, ແລະ

37.3 ລາຍງານບໍ່ທັນຕາມກຳນົດເວລາ;

ມາດຕາ 38 ມາດຕະການປັບໃໝ

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດດຳເນີນວິສາຫະກິດໄຟຟ້າ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປັບໃໝ ດ້ວຍການກະທຳຜິດໃດໜຶ່ງ:

38.1 ດຳເນີນທຸລະກິດໄຟຟ້າໂດຍບໍ່ມີໃບອະນຸຍາດຢ່າງຖືກຕ້ອງ(ລວມທັງການນຳໃຊ້ໃບອະນຸຍາດຂອງຜູ້ອື່ນ)ຈະຖືກປັບໃໝເທົ່າກັບ5%ຂອງມູນຄ່າໂຄງການ,ແລະຈະຖືກສັ່ງໃຫ້ຢຸດເຊົາການເຄື່ອນ ໄຫວ;

38.2 ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ເອົາໃບອະນຸຍາດດຳເນີນກິດຈະການຂອງຕົນ ໄປໃຫ້ຜູ້ອື່ນເຊົ່າ ຫຼືນຳໃຊ້ເພື່ອທຳການເຄື່ອນໄຫວດຳເນີນທຸລະກິດໄຟຟ້າຈະຖືກປັບໃໝ10 ເທົ່າຕົວ ຂອງຄ່າທຳນຽມອອກໃບອະນຸຍາດ;

38.3 ໃບອະນຸຍາດໝົດອາຍຸການບໍ່ເກີນ 3 ເດືອນ ຈະຖືກປັບໃໝ1 ເທົ່າ ຂອງຄ່າທຳນຽມອອກໃບອະນຸຍາດ;

38.4 ແຈ້ງຂໍ້ມູນບໍ່ຖືກຕ້ອງ ຫຼື ທຳການປອມແປງເອກະສານໃນເວລາປະກອບຄຳຮ້ອງຂໍອະນຸຍາດສືບຕໍ່ດຳເນີນກິດຈະການ, ນອກຈາກຈະໄດ້ຮັບໂທດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລ້ວ ຍັງຈະຖືກປັບໃໝ 10 ເທົ່າ ຂອງຄ່າທຳນຽມອອກໃບອະນຸຍາດ;

38.5 ບໍ່ປະຕິບັດຕາມ ຂໍ້ ທີ 3, 5, 6, 7, 8, 9 ແລະ 10 ຕາມທີ່ກຳນົດໄວ້ ໃນມາດຕາທີ່ 53 ຂອງ ກົດໝາຍວ່າດ້ວຍໄຟຟ້າ.

ການປັບໃໝ ດ້ວຍການກະທຳຜິດ ໃດໜຶ່ງ ຕາມທີ່ກຳນົດໄວ້ໃນຂໍ້ທີ 37.5 ຂ້າງເທິງນີ້ ແມ່ນຈະຖືກປັບໃໝ 1 ເທົ່າ ຕົວຂອງມູນຄ່າທີ່ເສຍຫາຍຕົວຈິງ.

มາດຕາ 39 ມາດຕະການທາງອາຍາ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນວິສາຫະກິດໄຟຟ້າ ຫາກໄດ້ກະທຳຜິດດ້ວຍຮູບການໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງ ກົດໝາຍວ່າດ້ວຍໄຟຟ້ານອກຈາກ ຈະຖືກຖອນໃບອະນຸຍາດ ດຳເນີນກິດຈະການແລ້ວ ຍັງຈະຕ້ອງຖືກລົງໂທດຕາມ ກົດໝາຍ ອາຍາ.

## ໝວດທີ IX
## ການຈັດຕັ້ງປະຕິບັດ

ມາດຕາ 40 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມໄຟຟ້າ ກະຊວງ ພະລັງງານ ແລະ ບໍ່ແຮ່, ພະແນກພະລັງງານ ແຂວງ, ນະຄອນຫຼວງ ເປັນຜູ້ຜັນຂະຫຍາຍ ແລະ ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ. ບັນດາຂະແໜງການທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ມາດຕາ 41 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ໄດ້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງສະບັບນີ້ໃຊ້ປ່ຽນແທນທຸກຂໍ້ຕົກລົງທີ່ມີເນື້ອໃນຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

*ລັດຖະມົນຕີວ່າການ*
*ກະຊວງ ພະລັງງານ ແລະ ບໍ່ແຮ່*



ສົມບູນ ຣາຊາສິມບັດ